ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ ເລກທີ 252 / ກຊສ

ນະຄອນຫຼວງວຽງຈັນ, ວັນທີ 6 ມິຖຸນາ 2007

## ຄຳສັ່ງແນະນຳ

## ວ່າດ້ວຍການຈັດຕັ້ງປະຕິບັດດຳລັດຂອງ ນາຍົກລັດຖະມົນຕີກ່ຽວກັບຊັບພະຍາກອນ ທຳມະຊາດທີ່ເປັນຢາ ເລກທີ 155/ ຍ, ລົງວັນ ທີ 30 ກັນຍາ 2003

ເຖິງ: ບັນດາຫົວໜ້າພະແນກດາຫົວໜ້າພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ

ເພື່ອປະຕິບັດກົດໝາຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 01/ສພຊ, ລົງວັນທີ 08/04/ 2000, ດຳລັດວ່າດ້ວຍຊັບພະຍາກອນທຳມະຊາດທີ່ເປັນຢາ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ແລະ ຂໍ້ຕົກລົງຂອງ ນາຍົກລັດຖະມົນຕີວ່າດ້ວຍການຮັບຮອງເອົາຜົນກອງປະຊຸມວຽກງານຄຸ້ມຄອງປ່າໄມ້ທົ່ວປະເທດ ຄັ້ງວັນ ທີ 01/03/2007 ສະບັບ ເລກທີ 25/ນຍ, ລົງວັນ ທີ 03/04/2007.

ຜ່ານການຕິດຕາມ ເກັບກຳສະພາບການ ແລະ ຜ່ານການຮັບລາຍງານ ຂອງຂະແໜງການຈາກທ້ອງຖິ່ນຕ່າງໆ ເຫັນວ່າການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາໃນ ທົ່ວປະເທດມີລັກສະ ນະຊະຊາຍ, ບໍ່ຖືກຕ້ອງຕາມເຕັກນິກວິຊາການ ການຂຸດຄົ້ນ ແລະ ການຜະລິດເຄິ່ງສຳເລັດຮູບມີລັກສະ ນະຟູມເຟືອຍ, ຜູ້ຂຸດຄົ້ນສ່ວນໃຫຍ່ຂາດສະຕິຄວາມຮັບຜິດຊອບ, ບໍ່ໄດ້ຄຳນຶງເຖິງການປົກປັກຮັກສາສິ່ງແວດລ້ອມ ແລະ ມີທ່າອ່ຽງເຮັດໃຫ້ຕົ້ນ ໄມ້ທີ່ເປັນຢາຫຼາຍຊະນິດຈະສູນພັນໄປ.

ອີງໃສ່ແຈ້ງການຂອງຫ້ອງວ່າການສຳນັກງາ ນາຍົກລັດຖະມົນຕີ ເລກທີ 049/ຫສນຍ.ກລຂ, ລົງວັນທີ 27 ມັງກອນ 2006.

**ສະນັ້ນ , ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຄຳສັ່ງແນະນຳດັ່ງ ນີ້:**

1. ໃຫ້ບັນດາພະແນກສາທາລະນະສຸກແຂວງ, ນະຄອນຫຼວງສົມທົບກັບພະແນກ ກະສິກຳ-ປ່າໄມ້, ອຸດສາຫະກຳ, ການຄ້າແຂວງ ແລະ ອຳນາດການປົກຄອງແຕ່ລະຂັ້ ເອົາໃຈໃສ່ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ດຳລັດ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ກ່ຽວກັບຊັບພະຍາກອນທຳມະຊາດ ທີ່ເປັນຢາ ຢ່າງເຂັ້ມງວດ. ພ້ອມກັນນັ້ນ, ກໍ່ຕ້ອງຈັດຕັ້ງເຜີຍແຜ່ ບັນຊີຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ, ແນໃສ່ເພື່ອຍົກ ສູງປະສິດທິຜົນທາງດ້ານເສດຖະກິດ ແລະ ທັງເປັນການປົກປັກຮັກສາຊັບພະຍາກອນທຳມະຊາດທີ່ເປັນຢາຂອງຊາດ ໃຫ້ມີຄວາມຍືນຍົງຕະຫຼອດໄປ.
2. ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ເປັນຢາໃຫ້ປະຕິບັດຕາມ ມາດຕາ 10 ຂອງດຳລັດ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003 ວ່າດ້ວຍຊັບພະຍາກອນທ□າມະຊາດທີ່ເປັນຢາ.

3. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ສົມທົບພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເພື່ອສຳຫຼວດ, ຂື້ນບັນຊີຄຸ້ມຄອງ ແລະ ນຳໃຊ້ໂດຍແບ່ງບັນຊີຊັບພະຍາກອນທຳມະຊາດ ທີ່ເປັນຢາອອກຈາກເຄື່ອງປ່າຂອງດົງໃຫ້ຈະແຈ້ງ ໂດຍອີງໃສ່ບັນຊີທີ່ໄດ້ກຳນົດໄວ້ໃນ ດຳລັດ ເລກທີ 155/ ຍ, ລົງວັນທີ 30 ກັນຍາ 2003, ຂໍ້ຕົກລົງຂອງນາຍົກ, ສະ ບັບເລກທີ 25/ ຍ, ລົງວັ ທີ 03/04/2007 ແລະ ປະສານງານໃນການຄຸ້ມຄອງ ການຂຸດຄົ້ນ, ປຸງແຕ່ງ, ຜະລິດ ແລະ ນຳໃຊ້ໃຫ້ມີປະສິດທິຜົນຢູ່ໃນທ້ອງຖິ່ນຂອງຕົນ.
4. ຫ້າມຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ ເພື່ອສົ່ງອອກໂດຍກົງຢ່າງຊະຊາຍ, ຄວນຕ້ອງ ໄດ້ຮັບການປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ດີທີ່ສຸດແມ່ນຜະລິດຕະພັນສຳເລັດຮູບ ຢູ່ພາຍໃນປະເທດເສຍກ່ອນ ແລ້ວຈຶ່ງຈຳໜ່າຍ ຫຼື ສົ່ງອອກໄປຕ່າງປະເທດ.
5. ການສ້າງຕັ້ງໂຮງງານຜະລິດຢາພື້ນເມືອງ ຫຼື ໂຮງງານຖອດຮີດ ພືດ, ຕົ້ນໄມ້ທີ່ເປັນຢາແບບຫັດ ຖະກຳ ຫຼື ແບບອຸດສະຫະກຳ ຕ້ອງໄດ້ຮັບອະນຸມັດຈາກ ກະຊວງສາທາລະນະສຸກເສຍກ່ອນ.
6. ກ່ອນການອະນຸມັດໃຫ້ຂຸດຄົ້ນຊັບພະຍາກອນທຳມະຊາດທີ່ເປັນຢາ, ຜູ້ສະເໜີຂໍຂຸດຄົ້ນ ຕ້ອງໄດ້ສ້າງແຜນການປູກ ຫຼື ລ້ຽງທົດແທນແຕ່ຫົວທີໂລດ.
7. ການຂຸດຄົ້ນຊັບພະຍາກອນທ□າມະຊາດທີ່ເປັນຢາ, ຕ້ອງໄດ້ຜ່ານການພິຈາລະນາເຫັນດີ ແລະ ອະນຸຈາກຂະແໜງການສາທາລະນສຸກເສຍກ່ອນ.
8. ໃຫ້ບັນດາພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງ ຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳ ສະບັບນີ້ຢ່າງເຂັ້ມງວດ. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນຳ ໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ກະຊວງ ສາທາລະນະສຸກ — ລັດຖະມົນຕີ

ດຣ. ປອນເມກ ດາລາລອຍ

**ບັນຊີພືດທີ່ເປັນຢາ ກະຊວງສາທາລະນະສຸກຄຸ້ມຄອງ**

| ລ/ດ | ຊື່ລາວ | ຊື່ວິທະຍາສາດ |
|---|---|---|
| 1 | ກູດຕີນຮຸ້ງ | Helmintostachus zeylanica (L.) Hook. |
| 2 | ກົງສະເດັນ | Croton sp. |
| 3 | ຂົມລະຫວານຈົ້ | Evodia lepta (Spreng) Merr. |
| 4 | ຂີງແຄງປາກັ້ງ | Homalomena spp |
| 5 | ຂີງຜາ | Polygonatum spp |
| 6 | ຂະຍອມພູ | Rauwolfia spp. |
| 7 | ແຄ່ | Cinnamomum spp. |
| 8 | ຈັນໄດ | Dracaena cambodiana P. |
| 9 | ສົ້ມມໍ | Terminalia chebula Retz. |
| 10 | ແສງເບື່ອ | Strychnos nux vomica L. |
| 11 | ແສງຄຳຕົ້ນ | Terminalia nigrovenulosa P. |
| 12 | ສ່ອງຟ້າ | Clausena harmandiana P. |
| 13 | ສີໄຄຕົ້ນ | Litseea cubeba (Lour.) Pers. |
| 14 | ຍີກບໍ່ຖອງ | Eurycoma longifolia Jack. |
| 15 | ຍໍປ່າ | Morinda tinctoria Roxb. |
| 16 | ດອກເຜີ້ງ | Dendrobium spp |
| 17 | ຕູມກາແດງ | Strychnos spp |
| 18 | ຕ່ອມ | Stephania spp |
| 19 | ຕີນເປັດ | Alstonia scholaris L. |
| 20 | ຝາງແດງ | Caesalpinia sappan Linn. |
| 21 | ມັນອ້ອມລີງ | Polygonum multiflorum Thunb |
| 22 | ມັນຂາໄກ່ | Codonopsis sp. |
| 23 | ຢາຫົວ | Smilax glabra Roxb. |
| 24 | ຫົວສາມສິບ | Stemona tuberosa Lour. |
| 25 | ຫວ້ານລາຍ | Anoectochilus formosus Hayana |
| 26 | ຫາດມີ້ | Artocarpus lakoocha Roxb. |
| 27 | ເຫັດທີ່ເປັນຢາຕ່າງໆ | Medicinal mushroom species |
| 28 | ອຸງນດ່ອນ | Osbeckia chinensis L. |
| 29 | ແຝກຫອມ | Vetiveria zizanioides (L.) Nash. |
| 30 | ເຄືອແຮມ | Coscinium spp |